ວັນທີສອງ ມົກກະຣາ ມາບັນຈົບ
ວົງຈອນຄົບ ເຖິງຄວບປີ ສີພັນດອນ
ໃນວັນເກີດ ຂອງເຈົ້າ ເຮົາອ່ວຍພອນ
ຂໍໃຫ້ດອນ ຈົ່ງຮາບຮື່ນ ຊື່ນສຸຂສັນ

ສິ່ງຄໍາກອນ ເປັນຂອງຂວັນ ອັນປະເສີດ
ໃນວັນເກີດ ຂໍໃຫ້ ໃຈຊື່ນບານ
ຂໍຢ່າມີ ຄວາມເອົ້າອຸກ ທຸກຈາບັນ
ຊື່ນສຸຂສັນ ວັນເກີດ ເຖີດຂວັນໃຈ

ຂໍໃຫ້ພົບ ຄວາມສົມຫວັງ ດັ່ງທີ່ຄິດ
ມາກມວນມິດ ຫຼາຍລົ້ນ ຄົນຈິງໃຈ
ກຽດຕິດຍົດ ຊື່ສຽງ ກ້ອງກຽງໄກ
ກ້າວໜ້າໄປ ເໝືອນວິຫົກ ນົກໂບຍບິນ

ອະຣັຕນາ ເທພເທວາ ອົງສັກສິດ
ເນຣະມິດ ເງິນທອງ ກອງຊັພສິນ
ຂໍພອນຟ້າ ມາປະທານ ຜ່ານອົງອິນ
ບໍ່ສູນສິ້ນ ຄວາມຮັກ ຄົນພັກດີ

ຂໍໃຫ້ດອນ ພ້ອມດ້ວຍລູກ ທຸກໆຄົນ
ໄດ້ບັນດົລ ພອນບັນດາລ ໃຫ້ສຸຂຂີ
ສຸຂພາບ ແຂງແຮງ ຕລອດປີ
ກອນບົດນີ້ ເປັນຄໍາກອນ ພອນຈາກໃຈ

ຈິ່ງສຸຂສັນ ໃນວັນ ຄ້າຍວັນເກີດ
ພອນປະເສີດ ໃນທົ່ວລ້າ ຟ້າສົດໃສ
ໃຫ້ເປັນດອນ ສາວຊີ້ດີ້ ຕລອດໄປ
ມີຫົວໃຈ ລົ້ນປ່ຽມສຸຂ ທຸກວັນຄືນ

ຢາກຈະມາ ຮ່ວມໂຕະຈີນ ກິນໂຕະເຈັກ
ຮ່ວມຕັດເຄັກ ເປົ່າທຽນ ວຽນຍິກຍິ່ມ
ເວົ້າຕລົກ ລືມຄວາມທຸກ ເສົ້າຂົມຂື່ນ
ຕລອດຄືນ ຮ່ວມເຕັ້ນລຳ ນ່ຳແຊມເປນ

ແມ່ນບໍ່ໄດ້ ສິ່ງຂອງຂວັນ ຢ່າຄອນຄິດ
ຢ່ານ້ອຍຈິດ ຄິດນ້ອຍໃຈ ໃຫ້ຣຳເຄັນ
ອ້າຍຢາກມາ ຄຽງຢູ່ ຄູ່ເນື້ອເຢັນ
ຍົກແຊມເປນ ຮ່ວມຄືນດີ Happy Birthday